ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=========000=========

ກະຊວງກະສິກຳ ແລະປ່າໄມ້

ກົມປ່າໄມ້

ເລກທີ 1036 /ກປມ

ນະຄອນຫຼວງວຽງຈັນ, ວັນທີ 23 APR 2010

# ຂໍ້ແນະນຳຂະແໜງປ່າໄມ້ແຂວງໃຫ້ເອົາໃຈໃສ່ຊີ້ນຳການຂຸດຄົ້ນໄມ້ໃຫ້ຫຼຸດຜ່ອນຄວາມເສຍຫາຍ.

- ອີງຕາມ ກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007
- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0182/ກປ, ລົງວັນທີ 23/02/2009, ວ່າດ້ວຍການສ້າງຕັ້ງກອງຂຸດຄົ້ນໄມ້ ແລະ ວິສະຫະກິດຂຸດຄົ້ນໄມ້
- ອີງຕາມລະບຽບການວ່າດ້ວຍການອະນຸຍາດຂຸດຄົ້ນໄມ້ແບບໝູນວຽນຈາກປ່າທຳມະຊາດ, ການວັດແທກໄມ້ທ່ອນ ແລະ ການຈັດປະເພດໄມ້ເພື່ອທຳການຜະລິດພາຍໃນ ແລະ ສົ່ງອອກ, ພ້ອມທັງການວັດແທກໄມ້ກິ່ງງ່າ, ຕໍໄມ້ ແລະ ການກຳຈັດເສດຕ່າງໆສະບັບເລກທີ 00060/ກປ.03, ລົງວັນທີ 24/02/2003 ປັບປຸງມາໃຊ້ລະບຽບ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າແທນ ສະບັບເລກທີ 0116, ລົງວັນທີ 17/05/2007.
- ອີງຕາມຫຼັກການ ແລະມາດຖານການຄຸ້ມຄອງປ່າໄມ້ ຂອງອົງການ ສະມາຄົມວູດ ຢູ່ ສ ປ ປ ລາວ.

ເພື່ອປະຕິບັດຕາມກົດໝາຍ, ຂໍ້ຕົກລົງ ແລະລະບຽບການຕ່າງໆຂອງລັດຖະບານ ທີ່ກ່າວຂ້າງເທິງ ພ້ອມເປັນການຍົກສູງປະລິມານວັດຖຸດິບ ແລະເປັນການສ້າງລາຍຮັບເພີ່ມໃຫ້ແກ່ສັງຄົມ, ຜູ້ດຳເນີນທຸລະກິດ ແລະໃຫ້ແກ່ລັດ

## ກົມປ່າໄມ້ອອກຂໍ້ແນະນຳ :

1. ຂະແໜງປ່າໄມ້ແຂວງມີໜ້າທີ່ໃນການຄຸ້ມຄອງ, ຈັດສັນປ່າໄມ້ແບບຍືນນານໃນຂອບເຂດແຂວງ ຂອງ ຕົນທີ່ຮັບຜິດຊອບ, ນອກນີ້ຍັງຮັບຜິດຊອບໃນການເອື້ອອຳນວຍກ່ຽວກັບການຢັ້ງຢືນປ່າໄມ້ຢູ່ພາຍໃນແຂວງເມື່ອເຫັນວ່າປ່າຜະລິດເຂດໃດນຶ່ງໄດ້ສະເໜີໃຫ້ອອກໃບຢັ້ງຢືນປ່າໄມ້. ບົດບາດ ແລະ ໜ້າທີ່ຂອງຂະແໜງປ່າໄມ້ ແມ່ນ

ການສະເໜີອອກໃບຢັ້ງຢືນປ່າໄມ້ ເມື່ອເຫັນວ່າມີຄວາມສອດຄ່ອງກັບຫຼັກການ ແລະມາດຕະຖານທີ່ຈະບັນລຸຜົນສຳເລັດໃນການຄຸ້ມຄອງ ແລະຈັດສັນປ່າໄມ້ແບບຍືນຍາມ.

2. ການຄຸ້ມຄອງ ແລະຈັດສັນປ່າໄມ້ຕ້ອງໄດ້ເອົາໃຈໃສ່ການຫຼຸດຜ່ອນຄວາມເສຍຫາຍໃຫ້ໜ້ອຍທີ່ສຸດຈາກການດຳເນີນການຂຸດຄົ້ນໄມ້ ແລະຫລີກລ້ຽງຜົນກະທົບຊຶ່ງອາດຈະເປັນການທຳລາຍຊັບພະຍາກອນປ່າໄມ້ສ່ວນອື່ນໆ ອ້ອມຂ້າງ. ກະລະນີດັ່ງກ່າວ ຄວນຈະພິຈາລະນາເຖິງການນຳໃຊ້ເຕັກນິກເພື່ອການຫລີກລ້ຽງຄວາມສູນເສຍໃນເວລາທຳການຕັດປ້ຳຊຶ່ງຈະເຮັດໃຫ້ໄມ້ແຕກຫັກ, ໄມ້ທ່ອນຊຸດໂຊມຄຸນນະພາບ ແລະ ເຮັດໃຫ້ມີການສູນເສຍ ທຳລາຍໄມ້ຢືນຕົ້ນຊະນິດອື່ນໆອ້ອມຂ້າງ ຊຶ່ງສາຍເຫດຍ້ອນການ ຈັດຕັ້ງປະຕິບັດການຂຸດຄົ້ນໄມ້ ແລະ ການປຸງແຕ່ງໄມ້ຍັງເກີດການເສຍຫາຍໄມ້ຫຼາຍຢູ່ (ຖິ້ມປະ).

3. ການເອົາໃຈໃສ່ກ່ຽວກັບການຂຸດຄົ້ນໄມ້ເພື່ອໃຫ້ມີການເສຍຫາຍໜ້ອຍທີ່ສຸດນັ້ນແມ່ນມີຄວາມຈຳເປັນຢ່າງຍິ່ງ ຊຶ່ງເປັນຜົນດີທາງດ້ານລາຄາຂອງໄມ້ໃຫ້ມີມູນຄ່າເພີ່ມ, ບໍ່ໃຫ້ລາຄາຕົກຕ່ຳຊຶ່ງເກີດຈາກກາຂຸດຄົ້ນ ແລະ ນອກນີ້ກໍ່ຍັງບໍ່ເຮັດໃຫ້ເກີດຄວາມເສຍຫາຍຕໍ່ສະພາບແວດລ້ອມຍ້ອນກິດຈະກຳການຂຸດຄົ້ນໄມ້ອີກດ້ວຍ.

4. ຂະແໜງການປ່າໄມ້ແຂວງຕ້ອງໄດ້ດຳເນີນຈັດຕັ້ງປະຕິບັດວຽກຮ່ວມກັບພະແນກກະສິກຳ ແລະປ່າໄມ້ແຂວງ ເພື່ອໃຫ້ຄວາມໝັ້ນໃຈໄດ້ວ່າເອກະສານຕ່າງໆທີ່ກ່ຽວຂ້ອງທີ່ໄດ້ຮ່າງຂຶ້ນຕ້ອງເປັນລາຍລັກອັກສອນ ເພື່ອເປັນຫຼັກຖານອ້າງອີງເຊັ່ນ: ຮ່າງສັນຍາການຂຸດຄົ້ນໄມ້ ຫລື ຮ່າງເອກະສານທີ່ກ່ຽວກັບວຽກງານປ່າໄມ້ຕ້ອງໄດ້ກະກຽມໃຫ້ສຳເລັດ. ບັນດາເອກະສານຕ້ອງປະກອບດ້ວຍສັນຍາທີ່ຜູກພັນເຖິງພັນທະຂອງກອງຂຸດຄົ້ນໄມ້ໂດຍປະຕິບັດຕາມ ລະ ບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ ເລກທີ 0116, ລົງວັນທີ 17/05/2007 ຢ່າງເຄັ່ງຄັດ.

5. ພັນທະຕ່າງໆທີ່ຕ້ອງການໃຫ້ກອງຂຸດຄົ້ນໄມ້ຮັບຜິດຊອບມີດັ່ງນີ້ :

- ກອງຂຸດຄົ້ນໄມ້ຕ້ອງໄດ້ຮັບຜິດຊອບໃນການຂຸດຄົ້ນໄມ້ໂດຍປະຕິບັດຕາມແຜນການຂຸດຄົ້ນຊຶ່ງໄດ້ໝາຍຕົ້ນເພື່ອການຕັດປ້ຳ ຕາມບັນຊີທີ່ກຳນົດໄວ້ ແລະ ຂົນສົ່ງໄມ້ທ່ອນໄປທ້ອນໂຮມໄວ້ສະໜາມ II
- ກອງຂຸດຄົ້ນຕ້ອງໄດ້ຮັບຜິດຊອບໃນການຂຸດຄົ້ນໄມ້ ແລະ ຂົນສົ່ງໄມ້ທ່ອນ, ໄມ້ກິ່ງງ່າ ແລະ ສ່ວນອື່ນໆທັງໝົດໄປທ້ອນໂຮມໄວ້ສະໜາມ II ໃຫ້ສຳເລັດໂດຍປະຕິບັດຕາມລະບຽບ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າຢ່າງເຄັ່ງຄັດ.

- ກອງຂຸດຄົ້ນໄມ້ບໍ່ມີສິດທີ່ຈະຕັດສິນ ແລະພິຈາລະນາວ່າໄມ້ທ່ອນ, ໄມ້ກິ່ງງ່າ ແລະ ສ່ວນຕ່າງໆທີ່ເສດເຫລືອວ່າໄດ້ຄຸນະພາບ ຫລືບໍ່ ຕາມໃຈຊອບໄດ້. ກອງຂຸດຄົ້ນໄມ້ມີໜ້າທີ່ຕ້ອງຂົນສົ່ງໄມ້ໄປຍັງສະໜາມ II ທັງໝົດ ພ້ອມທັງໄມ້ໂກນ, ໄມ້ແຕກແມ່ນແຕ່ໄມ້ທີ່ມີຕຳໜິ ຫລື ໄມ້ທີ່ໄດ້ຮັບການເສຍຫາຍລະຫວ່າງການຂຸດຄົ້ນກໍ່ບໍ່ໃຫ້ຍົກເວັ້ນ ແລະຕ້ອງໄດ້ຂົນສົ່ງໄປທ້ອນໂຮມໄວ້ສະໜາມ II ໃຫ້ໝົດ.

6. ຂະແໜງປ່າໄມ້ແຂວງຕ້ອງໄດ້ດຳເນີນການຈັດຕັ້ງປະຕິບັດໜ້າທີ່ ການປະເມີນຜົນຫລັງການຂຸດຄົ້ນນຳອີກ. ປະເມີນ ແລະພິຈາລະນາເຖິງຄຸນະພາບການຈັດຕັ້ງປະຕິບັດຂອງ ກອງຂຸດຄົ້ນໂດຍອີງໃສ່ການຊີ້ນຳ ຂອງ ພະແນກກະສິກຳ ແລະ ປ່າໄມ້ແຂວງ ວ່າກອງຄຸດຄົ້ນຈະຕ້ອງໄດ້ທົບແທນຄ່າໃຊ້ຈ່າຍເຖິງຜົນກະທົບຕໍ່ກັບປ່າໄມ້ໜ້ອຍຫລາຍປານໃດ ຊຶ່ງຍ້ອນຂາດການເອົາໃຈໃສ່ໃນໄລຍະທຳການຂຸດຄົ້ນຜ່ານມາ.

7. ກອງຂຸດຄົ້ນໄມ້ປະຈຳແຂວງ ແລະ ຂະແໜງປ່າໄມ້ແຂວງຕ້ອງຮ່ວມກັນເພື່ອຈັດຕັ້ງຊຸດອົບຮົມທາງດ້ານເຕັກນິກການຂຸດຄົ້ນໃຫ້ພະນັກງານກຳມະກອນທີ່ປະຕິບັດໜ້າທີ່ໃນການຂຸດຄົ້ນໄມ້ຢ່າງເປັນປະຈຳ ເພື່ອຫຼີກລ້ຽງການສູນເສຍຊຶ່ງມັກຈະເກີດຂື້ນໃນໄລຍະການດຳເນີນການຂຸດຄົ້ນໄມ້.

ດັ່ງນັ້ນ, ຈຶ່ງໄດ້ອອກຂໍ້ແນະນຳສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ກອງ, ວິສາຫະກິດ; ໜ່ວຍງານຮັບເໝົາການຂຸດຄົ້ນໄມ້ ໄດ້ນຳໄປຈັດຕັ້ງປະຕິບັດຢ່າງເຄັ່ງຄັດ.

ຄຳໄພ ມະນີວົງ

<u>ບ່ອນນຳສົ່ງ:</u>

- ຂະແໜງປ່າໄມ້ແຂວງທົ່ວປະເທດ ແຂວງລະ 1 ສະບັບ
- ເກັບມ້ຽນ 1 ສະບັບ